**ລະບຽບຂໍ້ບັງຄັບຕ່າງໆຂອງສະຫາພາບຢູຣົບ ກ່ຽວກັບການຮັບຮອງກຸ່ມຜູ້ຜະລິດ (Group of Operators)**

*Compiled on 31 January 2022*

## ລະບຽບ REGULATION (EU) 2018/848 OF THE EUROPEAN PARLIAMENT AND OF THE COUNCIL of 30 May 2018 ວ່າດ້ວຍການຜະລິດອິນຊີ ການໃຊ້ສະຫຼາກຜະລິດຕະພັນອິນຊີ ແລະ ການຍົກເລີກລະບຽບ Council Regulation (EC) No 834/2007

(ສະບັບສົມບູນ 01.01.2022)

ມາດຕາ 36

### ກຸ່ມຜູ້ປະກອບການ (Group of operators)

1. ກຸ່ມຜູ້ປະກອບການແຕ່ລະກຸ່ມຕ້ອງມີຄຸນສົມບັດດັ່ງນີ້

(a) ປະກອບດ້ວຍສະມາຊິກເຊິ່ງເປັນຊາວກະສິກອນ ຫຼື ຜູ້ປະກອບການທີ່ເຮັດການຜະລິດສະຫຼ່າຍ ຫຼື ລ້ຽງສັດນ້ຳ ໂດຍແລະອາດເຮັດການແປຮູບ, ກະກຽມ ຫຼື ຈຳໜ່າຍອາຫານ ຫຼື ອາຫານສັດດ້ວຍກໍໄດ້.

(b) ປະກອບດ້ວຍສະມາຊິກເຊິ່ງມີຄຸນສົມບັດຕາມເກນຕໍ່ໄປນີ້ເທົ່ານັ້ນ:

(i) ສະມາຊິກແຕ່ລະບຸກຄົນມີຄ່າໃຊ້ຈ່າຍໃນການກວດກາຮັບຮອງມາດຕະຖານສູງກວ່າຮ້ອຍລະ 2 ຂອງລາຍຮັບ (turnover) ຈາກການຜະລິດອິນຊີ ຫຼື ມູນຄ່າຜົນຜະລິດອິນຊີໜ້າຟາມໂດຍສະເລ່ຍ[1] (standard output) ໂດຍມີລາຍຮັບຈາກການຜະລິດອິນຊີບໍ່ເກີນ 25,000 ຢູໂຣຕໍ່ປີ ຫຼື ມູນຄ່າຜົນຜະລິດອິນຊີໜ້າຟາມໂດຍສະເລ່ຍບໍ່ເກີນ 15,000 ຢູໂຣຕໍ່ປີ

(ii) ສະມາຊິກແຕ່ລະບຸກຄົນມີຂະໜາດພື້ນທີ່ຟາມສູງສຸດບໍ່ເກີນ

— 5 ເຮັກຕາ

— 0.5 ເຮັກຕາໃນກໍລະນີການປູກພືດໃນເຮືອນຮົ່ມ ຫຼື

— 15 ເຮັກຕາ ສະເພາະໃນກໍລະນີທົ່ງຫຍ້າລ້ຽງສັດຖາວອນ (permanent grassland)

(c) ຟາມຂອງສະມາຊິກຕັ້ງຢູ່ໃນພື້ນທີ່ສະມາຊິກ ຫຼື ປະເທດທີສາມ

(d) ມີສະຖານະພາບເປັນບຸກຄົນຕາມກົດໝາຍ

▼M6

(e) ປະກອບດ້ວຍສະມາຊິກເຊິ່ງມີກິດຈະກຳການຜະລິດ ຫຼື ກິດຈະກຳອື່ນໆ ທີ່ກ່ຽວຂ້ອງຕາມທີ່ລະບຸໄວ້ໃນຂໍ້ (a) ດຳເນີນການຢູ່ໃນພື້ນທີ່ໃກ້ຄຽງກັນພາຍໃນພື້ນທີ່ຂອງສະມາຊິກ ຫຼື ປະເທດທີສາມດຽວກັນນັ້ນ

[1] Standard output (SO) ຄືມູນຄ່າໂດຍສະເລ່ຍຂອງຜົນຜະລິດທາງກະສິກຳ (ພືດຜົນຫຼືສັດລ້ຽງ) ໃນລາຄາໜ້າຟາມ (farm-gate price)

▼B

(f) ມີການຈັດຕັ້ງລະບົບການຕະຫຼາດຮ່ວມກັນເພື່ອຈຳໜ່າຍຜະລິດຕະພັນຂອງກຸ່ມ ແລະ

(g) ມີການຈັດຕັ້ງລະບົບຄວບຄຸມພາຍໃນ ເຊິ່ງປະກອບດ້ວຍຊຸດການດຳເນີນງານ ແລະ ຂັ້ນຕອນການປະຕິບັດງານໂດຍມີເອກະສານປະກອບ ເພື່ອໃຫ້ບຸກຄົນຫຼືໜ່ວຍງານທີ່ຮັບຜິດຊອບຕາມທີ່ໄດ້ລະບຸໄວ້ສາມາດເຮັດການກວດສອບການດຳເນີນງານຂອງສະມາຊິກແຕ່ລະບຸກຄົນເພື່ອໃຫ້ເປັນໄປຕາມລະບຽບນີ້

▼M6

ລະບົບຄວບຄຸມພາຍໃນ (ICS) ຕ້ອງມີຂັ້ນຕອນການປະຕິບັດງານໂດຍມີເອກະສານປະກອບໃນເລື່ອງຕ່າງໆດັ່ງຕໍ່ໄປນີ້

(i) ການຂຶ້ນທະບຽນສະມາຊິກຂອງກຸ່ມ

(ii) ການກວດກາປະເມີນພາຍໃນ ເຊິ່ງລວມເຖິງການກວດກາການຜະລິດຂອງສະມາຊິກແຕ່ລະບຸກຄົນ ສະຖານທີ່ຈິງ (physical on-the-spot inspections) ປີລະ1ຄັ້ງ ແລະ ອາດມີການກວດກາເພີ່ມເຕີມອື່ນໆ ຕາມການປະເມີນຄວາມສ່ຽງ ການຈັດເວລາສຳລັບການກວດກາປະເມີນ ເຫຼົ່ານີ້ເປັນໜ້າທີ່ຂອງຜູ້ຈັດການ ICS ແລະ ດຳເນີນການກວດກາໂດຍຜູ້ກວດກາ ICS ເຊິ່ງມີບົດບາດໜ້າທີ່ຕາມທີ່ກຳນົດໄວ້ໃນຂໍ້ (h)

(iii) ການຮັບຮອງສະມາຊິກໃໝ່ທີ່ເຂົ້າມາຮ່ວມໃນກຸ່ມທີ່ໄດ້ຮັບການຮັບຮອງຢູ່ແລ້ວ ຫຼື ການຮັບຮອງໜ່ວຍຜະລິດ ຫຼື ກິດຈະກຳການຜະລິດໃໝ່ຂອງສະມາຊິກເກົ່າ ແລ້ວແຕ່ກໍລະນີ ເຊິ່ງອະນຸມັດໂດຍຜູ້ຈັດການ ICS ໂດຍພິຈາລະນາຈາກລາຍງານການກວດກາຂອງຜູ້ກວດກາ ICS

(iv) ການຝຶກອົບຮົມຜູ້ກວດກາ ICS ເຊິ່ງຈັດໃຫ້ມີຂຶ້ນຢ່າງນ້ອຍປີລະ 1ຄັ້ງ ພ້ອມກັບມີການປະເມີນຄວາມຮູ້ທີ່ຜູ້ເຂົ້າຮ່ວມການຝຶກອົບຮົມໄດ້ຮັບ

(v) ການຝຶກອົບຮົມສະມາຊິກຂອງກຸ່ມກ່ຽວກັບຂັ້ນຕອນການປະຕິບັດງານຂອງລະບົບຄວບຄຸມພາຍໃນ ແລະ ຂໍ້ກຳນົດໃນລະບຽບນີ້

(vi) ການຄວບຄຸມເອກະສານ ແລະ ບັນທຶກຂໍ້ມູນຕ່າງໆ

(vii) ມາດຕະການທີ່ຕ້ອງດຳເນີນການໃນກໍລະນີທີ່ກວດພົບການລະເມີດມາດຕະຖານໃນລະຫວ່າງການກວດປະເມີນພາຍໃນ ລວມໄປເຖິງການຕິດຕາມຜົນ

(viii) ລະບົບກວດສອບຍ້ອນກັບພາຍໃນ ເຊິ່ງສາມາດຕະບຸທີ່ມາຂອງຜະລິດຕະພັນທີ່ຖືກນຳສົ່ງເຂົ້າມາໃນລະບົບການຕະຫຼາດຮ່ວມຂອງກຸ່ມ ແລະ ການກວດສອບຍ້ອນກັບຜະລິດຕະພັນທັງໝົດຂອງສະມາຊິກທຸກຄົນ ໄດ້ທຸກຂັ້ນຕອນເຊັ່ນ ການຜະລິດ, ການແປຮູບ, ການກະກຽມ ຫຼື ການຈຳໜ່າຍ ລວມໄປເຖິງການປະມານຜົນການຜະລິດຂອງສະມາຊິກແຕ່ລະຄົນ ແລະ ການກວດສອບກັບປະລິມານຜົນຜະລິດຈິງທີ່ໄດ້ຮັບ

(h) ມີການແຕ່ງຕັ້ງຜູ້ຈັດການ ICS 1 ຄົນ ແລະ ຜູ້ກວດກາ ICS 1 ຄົນ ຫຼື ຫຼາຍກວ່ານັ້ນ ເຊິ່ງອາດມາຈາກສະມາຊິກຂອງກຸ່ມກໍໄດ້. ຜູ້ຈັດການ ICS ແລະ ຜູ້ກວດກາ ICS ຕ້ອງບໍ່ເປັນບຸກຄົນດຽວກັນ, ຜູ້ກວດກາ ICS ຕ້ອງມີຈຳນວນພຽງພໍ ແລະ ໄດ້ສັດສ່ວນກັບປະເພດ, ໂຄງສ້າງ, ຂະໜາດ, ຜະລິດຕະພັນ, ກິດຈະກຳ ແລະ ຜົນຜະລິດ ຂອງການຜະລິດອິນຊີຂອງກຸ່ມດັ່ງກ່າວ ຜູ້ກວດກາ ICS ຕ້ອງເປັນຜູ້ທີ່ມີຄວາມຮູ້ຄວາມສາມາດກ່ຽວກັບຜະລິດຕະພັນ ແລະ ກິດຈະກຳຂອງກຸ່ມນັ້ນໆ ເປັນຢ່າງດີ

ຜູ້ຈັດການ ICS ມີໜ້າທີ່ດັ່ງຕໍ່ໄປນີ້:

(i) ກວດສອບຄຸນສົມບັດຂອງສະມາຊິກແຕ່ລະບຸກຄົນໃຫ້ເປັນໄປຕາມເກນທີ່ກຳນົດໄວ້ໃນຂໍ້ (a), (b) ແລະ (e)

(ii) ເຮັດຂໍ້ຕົກລົງເປັນໜັງສືລົງລາຍເຊັນ, ຊື່ລະຫວ່າງສະມາຊິກແຕ່ລະບຸກຄົນກັບກຸ່ມ ໂດຍໃນຂໍ້ຕົກລົງດັ່ງກ່າວສະມາຊິກສະແດງເຈດຈຳນົງທີ່ຈະ :

— ປະຕິບັດຕາມຂໍ້ກຳນົດໃນລະບຽບນີ້

— ເຂົ້າຮ່ວມໃນລະບົບ ICS ແລະ ປະຕິບັດຕາມຂັ້ນຕອນການປະຕິບັດງານຂອງ ICS ເຊິ່ງລວມເຖິງ ການປະຕິບັດພາລະງານ ແລະ ຄວາມຮັບຜິດຊອບທີ່ໄດ້ຮັບມອບໝາຍຈາກຜູ້ຈັດການ ICS ຕະຫຼອດຈົນມີໜ້າທີ່ຕ້ອງເກັບບັນທຶກຂໍ້ມູນຕ່າງໆ ໄວ້ເປັນຫລັກຖານ

— ຍິນຍອມໃຫ້ມີການເຂົ້າກວດກາປະເມີນໜ່ວຍຜະລິດ ແລະ ສະຖານທີ່ຜະລິດໂດຍຜູ້ກວດກາ ICS ແລະ ຜູ້ກວດກາຈາກໜ່ວຍງານຮັບຜິດຊອບ, ໜ່ວຍງານຄວບຄຸມ ຫຼື ໜ່ວຍງານຮັບຮອງ ໂດຍສະມາຊິກຕ້ອງຢູ່ດ້ວຍໃນຂະນະທີ່ມີການກວດກາ ແລະ ພ້ອມທີ່ຈະໃຫ້ຜູ້ກວດກາໄດ້ກວດສອບເອກະສານ ແລະ ບັນທຶກຂໍ້ມູນທັງມົດທີ່ມີຢູ່ຕະຫຼອດຈົນລົງຊື່ໃນລາຍງານການກວດກາ

— ຍອມຮັບ ແລະ ປະຕິບັດຕາມມາດຕະການ ແລະ ເງື່ອນໄຂໃນກໍລະນີທີ່ມີການລະເມີດມາດຕະຖານ ເຊິ່ງກໍານົດໂດຍຜູ້ຈັດການ ICS ຫຼື ໜ່ວຍງານທີ່ຮັບຜິດຊອບ, ໜ່ວຍງານຄວບຄຸມ ຫຼື ໜ່ວຍງານຮັບຮອງ ພາຍໃນໄລຍະເວລາທີ່ກໍານົດ

— ແຈ້ງໃຫ້ຜູ້ຈັດການ ICS ຊາບທັນທີ ຫາກສົງໃສວ່າຈະມີການລະເມີດມາດຕະຖານ

(iii) ເຮັດຂັ້ນຕອນການປະຕິບັດງານຂອງລະບົບຄວບຄຸມພາຍໃນ ແລະ ເອກະສານຂໍ້ມູນທີ່ກ່ຽວຂ້ອງປັບປຸງເອກະສານຂໍ້ມູນເຫຼົ່ານັ້ນໃຫ້ເປັນປະຈຸບັນຢູ່ສະເໝີ ແລະ ພ້ອມທີ່ຈະໃຫ້ຜູ້ກວດກາ ICS ແລະ ໃນກໍລະນີທີ່ສົມຄວນລວມໄປເຖິງສະມາຊິກຂອງກຸ່ມກວດສອບໄດ້

(iv) ເຮັດລາຍຊື່ສະມາຊິກຂອງກຸ່ມ ແລະ ປັບປຸງໃຫ້ເປັນປະຈຸບັນຢູ່ສະເໝີ

(v) ມອບໝາຍງານກວດກາ ແລະ ຄວາມຮັບຜິດຊອບໃຫ້ແກ່ຜູ້ກວດກາ ICS

(vi) ຕິດຕໍ່ປະສານງານລະຫວ່າງສະມາຊິກຂອງກຸ່ມກັບໜ່ວຍງານທີ່ຮັບຜິດຊອບ, ໜ່ວຍງານຄວບຄຸມ ຫຼື ໜ່ວຍງານຮັບຮອງ ລວມໄປເຖິງການຂໍອະນຸຍາດຜ່ອນຜັນໃນກໍລະນີຕ່າງໆ

(vii) ກວດສອບຄວາມຖືກຕ້ອງຂອງຂໍ້ມູນ ສາຖານະຜົນປະໂຫຍດທັບຊ້ອນທີ່ຜູ້ກວດກາ ICS ແຈ້ງເປັນປະຈໍາທຸກປີ

(viii) ເຮັດຕາຕະລາງເວລາການກວດປະເມີນຟາມສະມາຊິກໂດຍລະບົບຄວບຄຸມພາຍໃນ ແລະ ດໍາເນີນການເພື່ອໃຫ້ສາມາດເຮັດການກວດປະເມີນໄດ້ຢ່າງຄົບຖ້ວນພຽງພໍຕາມທີ່ລະບຸໄວ້ໃນຂໍ້ (ii) ໃນຫຍໍ້ໜ້າສອງ ຂໍ້ (g) ຕາມຕາຕະລາງທີ່ກໍານົດ

(ix) ເຮັດການຝຶກອົບຮົມໃຫ້ຜູ້ກວດກາ ICS ຢ່າງພຽງພໍ ຕະຫຼອດຈົນສາມາດປະເມີນຄວາມສາມາດ ແລະ ຄຸນສົມບັດຂອງຜູ້ກວດກາເປັນປະຈໍາທຸກປີ

(x) ອະນຸມັດສໍາມະຊິກໃໝ່ ຫຼື ໜ່ວຍຜະລິດ ຫຼື ກິດຈະກໍາການຜະລິດໃໝ່ໆ ຂອງສະມາຊິກເກົ່າ

(xi) ກໍານົດເງື່ອນໄຂ ແລະ ມາດຕະການໃນກໍລະນີທີ່ມີການລະເມີດມາດຕະຖານ ໂດຍໃຫ້ສອດຄ່ອງກັບມາດຕະການທີ່ວາງໄວ້ໃນຂັ້ນຕອນການປະຕິບັດງານຂອງລະບົບ ICS ທີ່ລະບຸໄວ້ໃນເອກະສານຕາມທີ່ກໍານົດໄວ້ຂໍ້ (g) ແລະ ຄອຍຕິດຕາມຜົນການປະຕິບັດຕາມເງື່ອນໄຂ ແລະ ມາດຕະການເຫຼົ່ານັ້ນ

(xii) ອະນຸມັດການຈ້າງມອບເໝົາການດໍາເນີນງານຂອງລະບົບ ICS ເຊັ່ນ ການກວດ ແລະລົງນາມໃນຂໍ້ຕົກລົງ ຫຼື ສັນຍາທີ່ກ່ຽວຂ້ອງ

ຜູ້ກວດກາ ICS ມີໜ້າທີ່ດັ່ງຕໍ່ໄປນີ້

(i) ເຮັດການກວດປະເມີນຟາມສະມາຊິກຂອງກຸ່ມຕາມຕາຕະລາງເວລາ ແລະ ຂັ້ນຕອນການເຮັດວຽກທີ່ໄດ້ຮັບການມອບໝາຍຈາກຜູ້ຈັດການ ICS

(ii) ເຮັດລາຍງານການກວດກາສະບັບຮ່າງໂດຍໃຊ້ແບບຟອມລາຍງານທີ່ກໍານົດ ແລະສົ່ງໃຫ້ຜູ້ຈັດການ ICS ພາຍໃນເວລາອັນສົມຄວນ

(iii) ຍື່ນໃບແຈ້ງສະຖານະຜົນທັບຊ້ອນພ້ອມລົງລາຍເຊັນ ຕາມເວລາທີ່ກໍານົດ ແລະ ປັບປຸງຂໍ້ມູນໃຫ້ເປັນປະຈຸບັນທຸກປີ

(iv) ເຂົ້າຮ່ວມໃນການຝຶກອົບຮົມຕ່າງໆ ຂອລລະບົບ ICS

▼B

2. ໜ່ວຍງານທີ່ຮັບຜິດຊອບ, ໜ່ວຍງານຄວບຄຸມ ຫຼື ໜ່ວຍງານຮັບຮອງ ແລ້ວແຕ່ກໍລະນີ ຕ້ອງຍົກເລີກໃບຮັບຮອງທີ່ລະບຸໄວ້ໃນມາດຕາ 35 ຂອງກຸ່ມຜູ້ປະກອບການທັງກຸ່ມ ຖ້າປະກົດວ່າ ເກີດຄວາມບົກພ່ອງໃນການຈັດຈັດຕັ້ງ ຫຼື ການເຮັດວຽກຂອງລະບົບ

ຄວບຄຸມພາຍໃນທີ່ລະບຸໄວ້ໃນຫຍໍ້ໜ້າທຳອິດ ໂດຍສະເພາະການບໍ່ສາມາດກວດພົບ ຫຼື ຈັດການກັບການລະເມີດມາດຕະຖານຂອງສະມາຊິກໃນກຸ່ມຜູ້ປະກອບການໄດ້ ມີຜົນກະທົບຕໍ່ການເປັນອິນຊີຂອງຜະລິດຕະພັນອິນຊີ ແລະຜະລິດຕະພັນໃນໄລຍະປັບປ່ຽນ

▼M6

ສະຖານະການດັ່ງຕໍ່ໄປນີ້ຢ່າງນ້ອຍໃຫ້ຖືວ່າເປັນການບົກຜ່ອງໃນການປະຕິບັດໜ້າທີ່ຂອງລະບົບ ICS

(a) ມີການຜະລິດ, ການແປຮູບ, ການກະກຽມ ຫຼື ການຈຳໜ່າຍຜະລິດຕະພັນທີ່ມາຈາກສະມາຊິກ ຫຼື ໜ່ວຍງານຜະລິດທີ່ຖືກລະງັບ ຫຼື ຍົກເລີກການຮັບຮອງ

(b) ມີການນຳຜະລິດຕະພັນຊຶ່ງຜູ້ຈັດການ ICS ຫ້າມບໍ່ໃຫ້ມີການກ່າວອ້າງວ່າ ມາຈາກການຜະລິດອິນຊີໂດຍການຕິດສະຫຼາກຫຼືການໂຄສະນາ ໄປວາງຈຳໜ່າຍໃນລັກສະນະດັ່ງກ່າວ

(c) ການເພີ່ມຊື່ສະມາຊິກໃໝ່ໃນລາຍຊື່ສະມາຊິກ ຫຼືປ່ຽນແປງກິດຈະກຳການຜະລິດຂອງຊະມາຊິກເກົ່າ ໂດຍບໍ່ໄດ້ຜ່ານຂັ້ນຕອນການອະນຸຍາດຂອງລະບົບການຄວບຄຸມພາຍໃນ

(d) ການບໍ່ເຮັດການກວດປະເມີນການຜະລິດຂອງຊະມາຊິກຄົນໃດຄົນໜຶ່ງໃນກຸ່ມໜຶ່ງ ສະຖານທີ່ຕົວຈິງ

(e) ການທີ່ບໍ່ມີການລະບຸບັ່ງຊີ້ໄວ້ໃນລາຍຊື່ສະມາຊິກວ່າ ສະມາຊິກຄົນໃດຖືກລະງັບຫຼືຍົກເລີກການຮັບຮອງ

(f) ການທີ່ຜົນກວດປະເມີນພາຍໃນກັບຜົນການກວດປະເມີນໂດຍໜ່ວຍງານທີ່ຮັບຜິດຊອບ, ໜ່ວຍງານຄວບຄຸ້ມ ຫຼື ໜ່ວຍງານຮັບຮອງ ແລ້ວແຕ່ລະກໍລະນີ ມີຄວາມແຕກຕ່າງກັນຢ່າງສຳຄັນ

g) ມີຄວາມບົກຜ່ອງຢ່າງຮ້າຍແຮງໃນການກຳນົດເງື່ອນໄຂ ແລະ ມາດຕະການທີ່ເໝາະສົມ ຕະຫຼອດຮອດການຕິດຕາມຜົນ ໃນກໍລະນີທີ່ມີການລະເມີດມາດຕະຖານຊຶ່ງຜູ້ກວດ ICS ຫຼືໜ່ວຍງານທີ່ຮັບຜິດຊອບ, ໜ່ວຍງານຄວບຄຸ້ມ ຫຼື ໜ່ວຍງານຮັບຮອງກວດພົບ

(h) ການມີຈຳນວນຜູ້ກວດ ICS ບໍ່ພຽງພໍ ຫຼື ຜູ້ກວດ ICS ອ່ອນຄວາມສາມາດສຳລັບປະເພດ, ໂຄງການ, ຂະໜາດຜະລິດຕະພັນ, ກິດຈະກຳ ແລະ ຜົນຜະລິດຂອງການຜະລິດອິນຊີຂອງກຸ່ມ

**ລະບຽບ COMMISSION IMPLEMENTING REGULATION (EU) 2021/279**

**of 22 February 2021**

**ເພື່ອກຳນົດຂໍ້ບັງຄັບໂດຍລະອຽດສຳຫຼັບການດຳເນີນການຕາມລະບຽບ of Regulation (EU) 2018/848 of the European Parliament and of the Council ວ່າດ້ວຍ ລະບົບຄວບຄຸມ ແລະ ມາດຕະການອື່ນໆ ເພື່ອຮອງຮັບການກວດສອບຢ້ອນກັບ ແລະການປະຕິບັດຕາມມາດຕະຖານໃນການຜະລິດອິນຊີ ແລະການໃຊ້ສະຫຼາກຜະລິດຕະພັນອິນຊີ**

**(Text with EEA relevance)**

## ມາດຕາ 4
## ອົງປະກອບ ແລະ ຂະໜາດຂອງກຸ່ມປະກອບການ

ສະມາຊິກຂອງກຸ່ມຜູ້ປະກອບການສາມາດຂຶ້ນທະບຽນກັບກຸ່ມຜູ້ປະກອບການໄດ້ແຕ່ໜຶ່ງກຸ່ມເທົ່ານັ້ນສຳຫຼັບຜະລິດຕະພັນຊະນິດໃດຊະນິດໜຶ່ງໂດຍຜູ້ປະກອບການອາດຈະດຳເນີນກິດຈະກຳຫຼາຍລັກສະນະທີ່ກ່ຽວເນື່ອງກັບຜະລິດຕະພັນນັ້ນໆໄດ້

ກຸ່ມຜູ້ປະກອບການມີຈຳນວນສະມາຊິກສູງສຸດໄດ້ບໍ່ເກີນ 2,000 ບຸກຄົນ

## ມາດຕາ 5
## ເອກະສານ ແລະບັນທຶກຂໍ້ມູນຂອງກຸ່ມຜູ້ປະກອບການ

ກຸ່ມຜູ້ປະກອບການຕ້ອງຈັດເກັບເອກະສານແລະບັນທຶກຂໍ້ມູນດັ່ງຕໍ່ໄປນີ້ໄວ້ເພື່ອການປະຕິບັດງານຂອງລະບົບຄວບຄຸມພາຍໃນ

(a) ລາຍຊື່ຂອງສະມາຊິກຂອງກຸ່ມຜູ້ປະກອບການທີ່ມີການຂຶ້ນທະບຽນໄວ້ ໂດຍມີຂໍ້ມູນກ່ຽວກັບສະມາຊິກແຕ່ລະຄົນດັ່ງນີ້

- (i) ຊື່ ແລະ ລະຫັດ ເລກປະຈຳຕົວຂອງຊະມາຊິກ
- (ii ຂໍ້ມູນສຳຫຼັບການຕິດຕໍ່
- (iii) ວັນທີຂຶ້ນທະບຽນເປັນສະມາຊິກ
- (iv) ພື້ນທີ່ການຜະລິດທັງໝົດທີ່ຢູ່ພາຍໃຕ້ການຈັດການຂອງຊະມາຊິກຄົນດັ່ງກ່າວ ບໍ່ວ່າຈະເປັນສ່ວນໜຶ່ງຂອງໜ່ວຍຜະລິດອິນຊີ ໜ່ວຍຜະລິດໄລຍະປັບປ່ຽນ ຫຼື ໜ່ວຍຜະລິດທົ່ວໄປ
- (v) ຂໍ້ມູນກ່ຽວກັບໜ່ວຍຜະລິດແຕ່ລະໜ່ວຍ ແລະ/ຫຼື ກິດຈະກຳການຜະລິດແຕ່ລະກິດຈະກຳ ໄດ້ແກ່ ຂະໜາດ, ສະຖານທີ່ຕັ້ງລວມເຖິງແຜນທີ່ຖ້າມີ ຜະລິດຕະພັນ, ວັນເລີ່ມຕົ້ນໄລຍະປັບປ່ຽນ ແລະ ປະມານການຜະລິດ
- (vi) ວັນທີໄດ້ຮັບການກວດປະເມີນຈາກລະບົບຄວບຄຸມພາຍໃນຄັ້ງສຸດທ້າຍ ລວມທັງຊື່ຜູ້ກວດກາ ICS
- (vii) ວັນທີໄດ້ຮັບການກວດປະເມີນຄັ້ງສຸດທ້າຍຈາກໜ່ວຍງານທີ່ຮັບຜິດຊອບ, ໜ່ວຍງານຄວບຄຸມ ຫຼື ໜ່ວຍງານຮັບຮອງແລ້ວແຕ່ກໍລະນີ ລວມທັງຊື່ຜູ້ກວດກາ
- (viii) ວັນທີ ແລະ ສະບັບທີ່ ຂອງລາຍຊື່ສະມາຊິກ

(b) ຂໍ້ຕົກລົງໃນການເປັນສະມາຊິກລະຫວ່າງສະມາຊິກກັບກຸ່ມຜູ້ປະກອບການທີ່ເປັນນິຕິບຸກຄົນ ເຊິ່ງລະບຸເຖິງສິດແລະໜ້າທີ່ຂອງສະມາຊິກແລະມີການລົງນາມໄວ້ເປັນຫຼັກຖານ

(c) ລາຍງານການກວດປະເມີນພາຍໃນທີ່ລົງລາຍເຊັນໂດຍຜູ້ກວດກາ ICS ແລະ ສະມາຊິກທີ່ໄດ້ຮັບກວດກາ ຢ່າງນ້ອຍຕ້ອງມີຂໍ້ມູນດັ່ງຕໍ່ໄປນີ້:

(i) ຊື່ສະມາຊິກ ແລະ ສະຖານທີ່ຕັ້ງຂອງໜ່ວຍຜະລິດຫຼືສະຖານທີ່ຜະລິດລວມໄປເຖິງສູນເກັບຊື້ແລະສູນລວບລວມທີ່ມີການດຳເນີນກິດຈະກຳຕາມທີ່ລະບຸໄວ້ໃນມາດຕາ 36(1)(a) ໃນລະບຽບ Regulation (EU) 2018/848 ເຊິ່ງຕ້ອງໄດ້ຮັບການກວດກາປະເມີນດ້ວຍ

(ii) ວັນແລະເວລາທີ່ການກວດປະເມີນພາຍໃນເລີ່ມຕົ້ນແລະສິ້ນສຸດລົງ

(iii) ຜົນການກວດກາ

(iv) ຂອບເຂດແລະອານາເຂດບໍລິເວນຂອງການກວດປະເມີນ

(v) ວັນທີອອກລາຍງານການກວດກາ

(vi) ຊື່ຜູ້ກວດກາ ICS

(d) ບັນທຶກຂໍ້ມູນການຝຶກອົບຮົມຜູ້ກວດກາ ICS ເຊິ່ງປະກອບດ້ວຍ

(i) ວັນທີຈັດຝຶກອົບຮົມ

(ii) ຫົວຂໍ້ໃນການຝຶກອົບຮົມ

(iii) ຊື່ຄູຝຶກ

(iv) ລາຍຊື່ ລາຍເຊັນຜູ້ເຂົ້າຮ່ວມຝຶກອົບຮົມ

(v) ຜົນການປະເມີນຄວາມຮູ້ທີ່ຜູ້ເຂົ້າຮ່ວມຝຶກອົບຮົມໄດ້ຮັບ ໃນກໍລະນີທີ່ສາມາດເຮັດໄດ້

(e) ບັນທຶກຂໍ້ມູນການຝຶກອົບຮົມສະມາຊິກຂອງກຸ່ມຜູ້ປະກອບການ

(f) ບັນທຶກຂໍ້ມູນເງື່ອນໄຂແລະມາດຕະການທີ່ດຳເນີນການໂດຍຜູ້ຈັດການ ICS ໃນກໍລະນີທີ່ມີການລະເມີດມາດຕະຖານ ເຊິ່ງມີຂໍ້ມູນຕໍ່ໄປນີ້:

(i) ສະມາຊິກທີ່ໄດ້ຮັບເງື່ອນໄຂຫຼືຖືກດຳເນີນມາດຕະການເນື່ອງຈາກລະເມີດມາດຕະຖານເຊັ່ນ ສະມາຊິກທີ່ຖືກລະງັບຫຼືໂ ເຍີກເລີກການຮັບຮອງ ຫຼື ຖືກໃຫ້ເລີ່ມຕົ້ນໄລຍະປັບປ່ຽນໃໝ່

(ii) ເອກະສານຂໍ້ມູນກ່ຽວກັບການລະເມີດມາດຕະຖານທີ່ກວດກາພົບ

(iii) ເອກະສານຂໍ້ມູນການຕິດຕາມຜົນການປະຕິບັດຕາມເງື່ອນໄຂແລະມາດຕະການ

(g) ບັນທຶກຂໍ້ມູນການກວດສອບຍ້ອນກັບ ລວມເຖິງຂໍ້ມູນປະລິມານຜົນຜະລິດແລະຜະລິດຕະພັນໃນກິດຈະກຳຕ່າງໆແລ້ວແຕ່ກໍລະນີດັ່ງຕໍ່ໄປນີ້:

(i) ການຊື້ແລະການກະຈາຍປັດໃຈການຜະລິດລວມໄປເຖິງວັດສະດຸຂະຫຍາຍພັນພືດເຊິ່ງດຳເນີນການໂດຍກຸ່ມ

(ii) ການຜະລິດລວມໄປເຖິງການເກັບກ່ຽວ

(iii) ການເກັບຮັກສາ

(iv) ການກະກຽມ

(v) ການສົ່ງຜະລິດຕະພັນຈາກສະມາຊິກແຕ່ລະຄົນໄປຍັງລະບົບການຕະຫຼາດຮ່ວມຂອງກຸ່ມ

(vi) ການອາງຈຳໜ່າຍຜະລິດຕະພັນໂດຍກຸ່ມຜູ້ປະກອບການ

(h) ຂໍ້ຕົກລົງແລະສັນຍາເປັນໜັງສືລະຫວ່າງກຸ່ມຜູ້ປະກອບການຮັບຜູ້ຮັບຈ້າງມອບເໝົາ ເຊິ່ງມີຂໍ້ມູນກ່ຽວກັບລັກສະນະຂອງກິດຈະກຳທີ່ຈ້າງມອບເໝົາ

(i) ການແຕ່ງຕັ້ງຜູ້ຈັດການ ICS

(j) ການແຕ່ງຕັ້ງຜູ້ກວດກາ ICS ແລະ ລາຍຊື່ຜູ້ກວດກາ ICS

ລາຍຊື່ສະມາຊິກທີ່ລະບຸໄວ້ໃນຂໍ້ (a) ໃນຍີ້ໜ້າທຳອິດຕ້ອງໄດ້ຮັບການປັບປຸງໃຫ້ເປັນປະຈຸບັນໂດຍຜູ້ຈັດການ ICS ຫາກມີການປ່ຽນແປງຂໍ້ມູນທີ່ລະບຸໄວ້ໃນຂໍ້ (a)(i) ເຖິງ (viii) ແລະຕ້ອງລະບຸວ່າສະມາຊິກຄົນໃດຖືກລະງັບຫຼືຍົກເລີກການຮັບຮອງອັນເປັນຜົນມາຈາກການລະເມີດມາດຕະຖານ ເຊິ່ງພົບໃນການກວດປະເມີນພາຍໃນ ຫຼືການກວດໂດຍໜ່ວຍງານທີ່ຮັບຜິດຊອບ

### ມາດຕາ 6
### ການແຈ້ງຂໍ້ມູນໂດຍຜູ້ຈັດການ ICS

ຜູ້ຈັດການ ICS ຕ້ອງແຈ້ງຂໍ້ມູນໃຫ້ໜ່ວຍງານທີ່ຮັບຜິດຊອບ ໜ່ວຍງານຄວບຄຸມ ຫຼື ໜ່ວຍງານຮັບຮອງ ແລ້ວແຕ່ກໍລະນີຊາບໂດຍທັນທີຫາກເກີດກໍລະນີຕໍ່ໄປນີ້

(a) ມີຂໍ້ລະແວງສົງໃສວ່າມີການລະເມີດມາດຕະຖານທີ່ສຳຄັນ ແລະ ຮ້າຍແຮງ

(b) ມີການລະງັບຫຼືຍົກເລີກສະມາຊິກຄົນໃດຄົນໜຶ່ງ ໜ່ວຍຜະລິດ, ຫຼືສະຖານທີ່ຜະລິດ ລວມໄປເຖິງສູນເກັບຊື້ ແລະ ສູນລວບລວມອອກຈາການຮັບຮອງຂອງກຸ່ມ

(c) ມີການຫ້າມບໍ່ໃຫ້ຈຳໜ່າຍຜະລິດຕະພັນຕົວໃດຕົວໜຶ່ງເປັນຜະລິດຕະພັນອິນຊີ ຫຼືຜະລິດຕະພັນຜ່ານໄລຍະປັບປ່ຽນ ລວມເຖິງຊື່ຂອງສະມາຊິກທີ່ກ່ຽວຂ້ອງຕະຫຼອດຈົນປະລິມານແລະລ໋ອດການຜະລິດຂອງຜະລິດຕະພັນດັ່ງກ່າວ

### ມາດຕາ 7
### ເກນຮອ້ຍລະຂັ້ນຕໍ່າໃນການກວດປະເມີນແລະການເກັບຕົວຢ່າງມາວິເຄາະ

ໃນການກວດປະເມີນຢ່າງເປັນທາງການທີ່ກຳນົດໄວ້ໃນມາດຕາ 38/(4) ໃນລະບຽບ of Regulation (EU) 2018/848 ໂດຍໜ່ວຍງານທີ່ຮັບຜິດຊອບ ໜ່ວຍງານຄວບຄຸມ ຫຼື ໜ່ວຍງານຮັບຮອງ ແລ້ວແຕ່ກໍລະນີ ໃຫ້ໃຊ້ເກນຮ້ອຍລະຂັ້ນຕໍ່າດັ່ງຕໍ່ໄປນີ້ ໂດຍພິຈາລະນາຈາກຜົນການປະເມີນຄວາມສ່ຽງໃນການລະເມີດມາດຕະຖານ

(a) ການກວດປະເມີນຜູ້ປະກອບການຫຼືກຸ່ມຜູ້ປະກອບການໂດຍໜ່ວຍງານກວດກາຮັບຮອງຕ້ອງເປັນການກວດກາໂດຍບໍ່ແຈ້ງໃຫ້ຊາບລ່ວງໜ້າຢ່າງນ້ອຍຮ້ອຍລະ 10 ຂອງການກວດກາປົກກະຕິທັງໝົດທຸກປີ

(b) ໃຫ້ມີການກວດປະເມີນພິເສດ (additional controls) ຢ່າງນ້ອຍຮ້ອຍລະ 10ຂອງການກວດປະເມີນທີ່ກຳນົດໄວ້ໃນ ມາດຕາ 38(3)[2] ໃນລະບຽບ Regulation (EU) 2018/848 ທຸກປີ

(c) ໃຫ້ເຮັດການສຸ່ມເກັບຕົວຢ່າງມາວິເຄາະຕາມທີ່ລະບຸໄວ້ໃນມາດຕາ 14(h) ໃນລະບຽບ (EU) 2017/625ຈາກຜູ້ປະກອບການຢ່າງໜ້ອຍຮ້ອຍລະ 5 ຂອງຈຳນວນຜູ້ປະກອບການ ໂດຍບໍ່ຮ່ວມຜູ້ປະກອບການທີ່ໄດ້ຮັບການຍົກເວັ້ນຕາມຫຼັກເກນໃນມາດຕາ 34(2)[3] ແລະ 35 (8) ໃນລະບຽບ Regulation (EU) 2018/848 ໃນທຸກປີ

(d) ໃຫ້ເຮັດການສຸ່ມເກັບຕົວຢ່າງມາວິເຄາະຕາມທີ່ໄດ້ລະບຸໄວ້ໃນມາດຕາ 14(h) ໃນລະບຽບ Regulation (EU) 2017/625 ຈາກຜູ້ປະກອບການຢ່າງໜ້ອຍລະ 2 ຂອງຈຳນວນສະມາຊິກຂອງກຸ່ມຜູ້ປະກອບການແຕ່ລະກຸ່ມ ທຸກປີ

(e) ໃຫ້ເຮັດການສຸ່ມກວດສະມາຊິກຂອງກຸ່ມຜູ້ປະກອບການຢ່າງໜ້ອຍຮ້ອຍລະ 5 ຂອງຈຳນວນສະມາຊິກທັງໝົດ ແຕ່ຕ້ອງບໍ່ໜ້ອຍກວ່າ 10 ຄົນ ຫຼືໜ້ອຍກວ່ານັ້ນ ໃຫ້ເຮັດການກວດປະເມີນສະມາຊິກທຸກຄົນການຕາມທີ່ກຳນົດໄວ້ໃນມາດຕາ 38(3) ໃນລະບຽບ Regulation (EU) 2018/848.

[2] ຜູ້ປະກອບການແລະກຸ່ມຜູ້ປະກອບການທັງໝົດ ຍົກເວັ້ນຜູ້ປະກອບການທີ່ລະບຸໄວ້ໃນມາດຕາ 34(2) ແລະ 35(8) ຕ້ອງໄດ້ຮັບການກວດປະເມີນການປະຕິບັດຕາມມາດຕະຖານຢ່າງນ້ອຍປີລະ 1 ຄັ້ງ ການກວດປະເມີນນີ້ໃຫ້ລວມເຖິງການກວດສະຖານທີ່ຈິງແຕ່ໃຫ້ຍົກເວັ້ນໄດ້ໃນກໍລະນີຕໍ່ໄປນີ້
(a) ການກວດປະເມີນຜູ້ປະກອບການ ຫຼື ກຸ່ມຜູ້ປະກອບການນັ້ນໆ ບໍ່ພົບການລະເມີດມາດຕະຖານໃດໆ ທີ່ມີຜົນກະທົບຕໍ່ຄວາມເປັນຜະລິດຕະພັນອິນຊີຫຼືຜະລິດຕະພັນໄລຍະປັບປ່ຽນ ຢ່າງນ້ອຍ 3 ປີຕິດຕໍ່ກັນ ແລະ
(b) ຜູ້ປະກອບການ ຫຼື ກຸ່ມຜູ້ປະກອບການນັ້ນໆ ໄດ້ຮັບປະເມີນຕາມຫຼັກເກນທີ່ລະບຸໄວ້ໃນວັກ 2 ຂອງມາດຕານີ້ ແລະມາດຕາ 9 ໃນລະບຽບ Regulation (EU) 2017/625 ແລ້ວພົບວ່າມີຄວາມສ່ຽງຕໍ່າໃນການລະເມີດມາດຕະຖານໃນກໍລະນີນີ້ການກວດປະເມີນ ສະຖານທີ່ຈິງແຕ່ລະຄັ້ງຕ້ອງຫ່າງກັນບໍ່ເກີນ 24 ເດືອນ

ມາດຕາ 10

**ບົດສະເພາະການ**

1. ກຸ່ມຜູ້ປະກອບການໃນປະເທດທີສາມຊຶ່ງປະຕິບັດຕາມລະບຽບ Regulations (EC) No 834/2007, (EC) No 889/2008 ແລະ ລະບຽບ (EC) No 1235/2008 ກ່ອນວັນທີລະບຽບສະບັບນີ້ຈະເກີດຜົນບັງຄັບໃຊ້ ແລະມີຄວາມຈຳເປັນຕ້ອງດຳເນີນການປ່ຽນແປງສຳຄັນ ໃນການບໍລິຫານ, ກົດໝາຍ ແລະ ໂຄງສ້າງ ຂອງກຸ່ມ ເພື່ອໃຫ້ເປັນໄປຕາມເກນຈຳນວນສະມາຊິກສູງສຸດຂອງກຸ່ມປະກອບການທີ່ກຳນົດໄວ້ໃນວັກ 2 ມາດຕາ 4 ໃນລະບຽບນີ້ ຈະໄດ້ຮັບການຜ່ອນຜັນໃຫ້ເລີ່ມປະຕິບັດຂໍ້ກຳນົດດັ່ງກ່າວຢ່າງຊ້າທີ່ສຸດຕັ້ງແຕ່ວັນທີ 1 ມັງກອນ 2023 ເປັນຕົ້ນໄປ

2. ຄູ່ມືມາດຕະການສຳຫຼັບການລະເມີດມາດຕະຖານທີ່ແຕ່ລະປະເທດສະມາຊິກທີ່ເຮັດຂຶ້ນຕາມຫຼັກເກນໃນມາດຕາ 8 ຈະນຳມາບັງຄັບໃຊ້ຢ່າງຊ້າທີ່ສຸດຕັ້ງແຕ່ວັນທີ 1 ມັງກອນ 2023 ເປັນຕົ້ນໄປ

**ລະບຽບ COMMISSION DELEGATED REGULATION (EU) 2021/771**

**of 21 January 2021**

**ເພື່ອໃຊ້ປະກອບລະບຽບ Regulation (EU) 2018/848 ຂອງລັດສະພາພາບຢຸໂຣບ ແລະ ຄະນະສາພາຢູໂຣບ ໂດຍກຳນົດຫຼັກເກນແລະເງື່ອນໄຂສະເພາະສຳລັບການກວດສອບເອກະສານພາຍໃຕ້ກອບຂອງການກວດປະເມີນໂດຍໜ່ວຍງານກວດກາຮັບຮອງມາດຕະຖານການຜະລິດອິນຊີ ແລະ ການກວດປະເມີນກຸ່ມຜູ້ປະກອບການ**

(Text with EEA relevance)

(ສະບັບສົມບູນ 11.05.2021)

ມາດຕາ 2

**ການກວດປະເມີນກຸ່ມຜູ້ປະກອບການໂດຍໜ່ວຍງານກວດກາຮັບຮອງ**

1. ໜ່ວຍງານທີ່ຮັບຜິດຊອບ ໜ່ວຍງານຄວບຄຸມ ຫຼື ໜ່ວຍງານຮັບຮອງ ແລ້ວແຕ່ກໍລະນີ ຕ້ອງມອບໝາຍງານກວດກາໃຫ້ແກ່ຜູ້ກວດກາທີ່ມີຄວາມຮູ້ຄວາມສາມາດໃນການກວດປະເມີນລະບົບຄວບຄຸມພາຍໃນ (ICS) ເພື່ອກວດສອບຢືນຢັນວ່າກຸ່ມຜູ້ປະກອບການໄດ້ປະຕິບັດຕາມມາດຕະຖານທີ່ກຳນົດໄວ້

2. ໃນການກວດປະເມີນການຈັດຕັ້ງ ການປະຕິບັດໜ້າທີ່ ແລະ ການບຳລຸງຮັກສາລະບົບ ICS ຂອງກຸ່ມຜູ້ປະກອບການ ໜ່ວຍງານທີ່ຮັບຜິດຊອບ, ໜ່ວຍງານຄວບຄຸມ ຫຼື ໜ່ວຍງານຮັບຮອງ ແລ້ວແຕ່ກໍລະນີ ຕ້ອງເຮັດການກວດສອບຂໍ້ມູນໃນເລື່ອງຕໍ່ໄປນີ້ ເປັນເບື້ອງຕົ້ນ

(a) ການນຳຂັ້ນຕອນການປະຕິບັດງານຂອງ ICS ທີ່ລະບຸໄວ້ໃນເອກະສານໄປປະຕິບັດ ເປັນໄປຕາມຂໍ້ກຳນົດທີ່ອ້າງໄວ້ໃນກົດລະບຽບ Regulation (EU) 2018/848;

(b) ລາຍຊື່ສະມາຊິກຂອງກຸ່ມຜູ້ປະກອບການເຊິ່ງມີຂໍ້ມູນຂອງສະມາຊິກແຕ່ລະບຸກຄົນຕາມທີ່ກຳນົດໄວ້ມີການປັບປຸງໃຫ້ເປັນປະຈຸບັນຢູ່ສະເໝີ ແລະ ສອດຄ່ອງກັບຂອບເຂດທີ່ລະບຸໄວ້ໃນໃບຮັບຮອງ

(c) ສະມາຊິກທຸກຄົນຂອງກຸ່ມຜູ້ປະກອບການປະຕິບັດຕາມຫຼັກເກນທີ່ກຳນົດໄວ້ໃນມາດຕາ36(1)(a), (b) ແລະ (e) ໃນລະບຽບ Regulation (EU) 2018/848 ຕະຫຼອດໄລຍະເວລາທີ່ເຂົ້າຮ່ວມເປັນສະມາຊິກຂອງກຸ່ມ

(d) ຜູ້ກວດກາ ICS ມີຈຳນວນທີ່ເໝາະສົມ ມີຄວາມຮູ້ຄວາມສາມາດແລະໄດ້ຮັບການຝຶກອົບຮົມຢ່າງພຽງພໍ ແລະ ບໍ່ມີຜົນປະໂຫຍດທັບຊ້ອນໃນການປະຕິບັດໜ້າທີ່

(e) ມີການກວດປະເມີນພາຍໃນສະມາຊິກທຸກຄົນຂອງກຸ່ມຜູ້ປະກອບການ ກິດຈະກຳການຜະລິດ, ໜ່ວຍຜະລິດ, ສະຖານທີ່ຜະລິດ ລວມເຖິງສູນເກັບຊື້ ແລະ ສູນລວບລວມ ຢ່າງນ້ອຍປີລະ1ຄັ້ງ ແລະມີການບັນທຶກຂໍ້ມູນໄວ້ເປັນເອກະສານ

(f) ສະມາຊິກໃໝ່ ຫຼື ໜ່ວຍຜະລິດ ແລະ ກິດຈະກຳການຜະລິດໃໝ່ ເຊິ່ງລວມເຖິງສູນເກັບຊື້ ແລະ ສູນລວບລວມຂອງສະມາຊິກເກົ່າ ໄດ້ຮັບການອະນຸມັດຈາກຜູ້ຈັດການ ICS ບົນພື້ນຖານຂອງລາຍງານການກວດປະເມີນພາຍໃນ ແລະ ເປັນໄປຕາມຂັ້ນຕອນປະຕິບັດທີ່ລະບຸໄວ້ໃນເອກະສານຄູ່ມື ICS

(g) ຜູ້ຈັດການ ICS ໄດ້ກຳນົດມາດຕະການແລະເງື່ອນໄຂທີ່ເໝາະສົມສຳລັບກໍລະນີການລະເມີດມາດຕະຖານ ລວມເຖິງການຕິດຕາມຜົນໂດຍດຳເນີນການຕາມຂັ້ນຕອນການປະຕິບັດທີ່ລະບຸໄວ້ໃນເອກະສານຄູ່ມື ICS

(h) ການແຈ້ງຂໍ້ມູນໂດຍຜູ້ຈັດການ ICS ໃຫ້ແກ່ໜ່ວຍງານທີ່ຮັບຜິດຊອບ ໜ່ວຍງານຄວບຄຸມຫຼື ໜ່ວຍງານຮັບຮອງ ໄດ້ຮັບຮູ້ເປັນໄປຢ່າງເໝາະສົມ ແລະ ພຽງພໍ

(i) ລະບົບຄວບຄຸມພາຍໃນສາມາດເຮັດການກວດສອບຍ້ອນກັບຜະລິດຕະພັນທັງໝົດ ແລະ ສະມາຊິກທຸກຄົນຂອງກຸ່ມຜູ້ປະກອບການໄດ້ ໂດຍໃຊ້ການປະມານການຜົນຜະລິດ ແລະ ການກວດສອບກັບຜະລິດຕະພັນຈິງຂອງສະມາຊິກແຕ່ລະຄົນ

(j) ສະມາຊິກຂອງກຸ່ມຜູ້ປະກອບການໄດ້ຮັບການຝຶກອົບຮົມຢ່າງພຽງພໍກ່ຽວກັບຂັ້ນຕອນການປະຕິບັດງານຂອງ ICS ແລະ ຂໍ້ກຳນົດໃນລະບຽບ Regulation (EU) 2018/848.

3. ໜ່ວຍງານທີ່ຮັບຜິດຊອບ ໜ່ວຍງານຄວບຄຸມ ຫຼື ໜ່ວຍງານຮັບຮອງ ຕ້ອງໃຊ້ການປະເມີນຄວາມສ່ຽງໃນການເລືອກສຸ່ມຕົວຢ່າງຈາກສະມາຊິກຂອງຜູ້ປະກອບການເພື່ອເຮັດການກວດປະເມີນຊ້ຳ (reinspection) ເພື່ອໃຫ້ເປັນໄປຕາມຂໍ້ກຳນົດໃນມາດຕາ 38(4)(d) ໃນລະບຽບ Regulation (EU) 2018/848 ໂດຍຢ່າງນ້ອຍໃຫ້ພິຈາລະນາຈາກປະລິມານ ແລະ ມູນຄ່າການຜະລິດ ແລະ ການປະເມີນຄວາມສ່ຽງໃນການລະເມີດມາດຕະຖານທີ່ກຳນົດໄວ້ໃນ Regulation (EU) 2018/848 ການກວດກາປະເມີນຊ້ຳຕ້ອງເປັນການໄປກວດສະຖານທີ່ຈິງໂດຍສະມາຊິກທີ່ຖືກສຸ່ມຕ້ອງຢູ່ດ້ວຍຂະນະທີ່ມີການກວດກາ

4. ໜ່ວຍງານທີ່ຮັບຜິດຊອບ ໜ່ວຍງານຄວບຄຸມ ຫຼື ໜ່ວຍງານຮັບຮອງ ຕ້ອງຈັດສັນເວລາໃຫ້ເໝາະສົມກັບການກວດປະເມີນກຸ່ມຜູ້ປະກອບການໂດຍພິຈາລະນາຈາກປະເພດ, ໂຄງສ້າງ, ຂະໜາດ, ຜະລິດຕະພັນ, ກິດຈະກຳການຜະລິດ ແລະ ຜົນຜະລິດ ໃນການຜະລິດກະສິກຳອິນຊີຂອງກຸ່ມຜູ້ປະກອບການນັ້ນໆ

5. ໜ່ວຍງານທີ່ຮັບຜິດຊອບ ໜ່ວຍງານຄວບຄຸມ ຫຼື ໜ່ວຍງານຮັບຮອງ ຕ້ອງຈັດໃຫ້ມີການຕິດຕາມເບິ່ງການປະຕິບັດງານກວດກາ (witness audits) ເພື່ອກວດສອບຄວາມຮູ້ຄວາມສາມາດຂອງຜູ້ກວດກາ ICS

6. ໜ່ວຍງານທີ່ຮັບຜິດຊອບ ໜ່ວຍງານຄວບຄຸມ ຫຼື ໜ່ວຍງານຮັບຮອງ ຕ້ອງເຮັດການປະເມີນວ່າລະບົບ ICS ມີການປະຕິບັດໜ້າທີ່ທີ່ບົກຜ່ອງຫຼືບໍ່ ໂດຍພິຈາລະນາຈາກຈຳນວນການລະເມີດມາດຕະຖານທີ່ຜູ້ກວດກາ ICS ກວດບໍ່ພົບ ແລະ ຜົນການສອບສວນສາເຫດ ແລະ ລັກສະນະຂອງການລະເມີດມາດຕະຖານເຫຼົ່ານັ້ນ.